# ສັມພາດທ່ານສົມໝາຍ ສິຣິພັນໂຍ
# "ໝໍແຂ້ວຄົນລາວໃນສະຫະຣັຖ"

(ສັມພາດໂດຍທີມງານນິຕຍະສາຣລາວແນັດທ໌)

ທ່ານໝໍປົວແຂ້ວຄົນລາວ "ສົມໝາຍ ສິຣິພັນໂຍ" ເປັນຄົນວຽງຈັນທນ໌ ມີອ້າຍນ້ອງຮ່ວມສາຍເລືອດດ້ວຍກັນມາທັງໝົດ 6 ຄົນ ເປັນຜູ້ຊາຍ 4 ຄົນ ແລະຜູ້ຍິງ 2 ຄົນ ສຳຫລັບຕົວຂອງທ່ານເອງນັ້ນເປັນລູກຊາຍຜູ້ທີ່ 3 ສຳເຣັດການສຶກສາຈາກສະຖາບັນການສຶກສາມະຫາວິທຍາໄລ ລຸຍຊີອານ່າຝ່າຍທັນຕະແພທ (ໝໍແຂ້ວ) ປັດຈຸບັນກຳລັງເປີດຄລີນິກບໍຣິການຮັບໃຊ້ສັງຄົມ ຢູ່ໃນຣັຖເທັກຊັສ ສະຫະຣັຖອະເມຣິກາ.

ລາວແນັດທ໌ : ສະບາຍດີ ກ່ອນອື່ນແມ່ນຢາກຈະໃຫ້ທ່ານໄດ້ອະທິບາຍພໍສັງເຂບກ່ຽວກັບປະສົບການແລະຊີວິດຂອງທ່ານໃນທີ່ນີ້ເປັນມາຄືແນວໃດກັນພໍ່ແມ່ຂອງທ່ານມີຄວາມຄາດຫວັງແລະຍຶດໝັ້ນຄືແນວໃດກັນກ່ຽວກັບຕົວຂອງທ່ານຢູ່ໃນປະເທດນີ້?

ທ່ານໝໍສົມໝາຍ : ກໍບໍ່ມີຫຍັງຫລວງຫລາຍໄປກວ່ານີ້ຊຶ່ງພວກທ່ານກໍແມ່ນຢາກຈະໃຫ້ຂ້າພະເຈົ້າໄດ້ຮັບການສຶກສາເລົ່າຮຽນຢູ່ໃນຣະດັບທີ່ສູງໆມີວິຊາອາຊີບທີ່ດີຕິດຕົວແລະສາມາດຊ່ອຍຕົວເອງແລະຄອບຄົວໄປໄດ້ໃນອານາຄົດ.

ລາວແນັດທ໌ : ປັດຈຸບັນອາຊີພຫລັກຂອງທ່ານ ແມ່ນເຮັດຫຍັງກັນແທ້ ?

ທ່ານໝໍສົມໝາຍ : ຂ້າພະເຈົ້າເປັນໝໍປົວແຂ້ວ "Family Dentist"

ລາວແນັດທ໌ : ຂໂທດ ທ່ານສຳເຣັດການສຶກສາມາຈາກສະຖາບັນແຫ່ງໃດກັນ ?

ທ່ານໝໍສົມໝາຍ : ຂ້າພະເຈົ້າຈົບການສຶກສາມາຈາກມະຫາວິທຍາລັຍລຸຍຊີອານ່າ ສະຫະຣັຖອະເມຣິກາ "Louisiana State University U.S.A."

ລາວແນັດທ໌ : ທ່ານມີຄວາມຮູ້ສຶກແນວໃດກັນ ກ່ຽວກັບມະຫາວິທຍາໄລແຫ່ງນີ້ຊຶ່ງທ່ານໄດ້ຮຽນຈົບຫລັກສູດມາທັງໝົດນີ້?

ທ່ານໝໍສົມໝາຍ : ຂ້າພະເຈົ້າຮູ້ສຶກພູມໃຈໃນຕົວເອງເປັນທີ່ສຸດທີ່ເປັນຄົນລາວຜູ້ນຶ່ງທີ່ໄດ້ມີໂອກາສເຂົ້າໄປຮ່ຳຮຽນກອດກອບເອົາວິຊາຄວາມຮູ້ກ່ຽວກັບຂະແໜງການທີ່ຕົວເອງມັກຈົນຈົບຫລັກສູດແລະສາມາດນຳອອກມາໝູນໃຊ້ເພື່ອຊ່ອຍສັງຄົມໃນທາງທີ່ສ້າງສັນ ສະຖາບັນການສຶກສາລຸຍຊີອານ່າແຫ່ງນີ້ຈັດໄດ້ວ່າເປັນອີກບ່ອນນຶ່ງໃນອີກຫລາຍໆແຫ່ງຢູ່ໃນສະຫະຣັຖອະເມຣິກາທີ່ໄດ້ກໍ່ສ້າງຜູ້ຄົນໃຫ້ກາຍມາເປັນຄົນຜູ້ທີ່ມີຫົວກ້າວໜ້າທັງໃນເວລາທີ່ຜ່ານມາແລະປັດຈຸບັນ.

ລາວແນັດທ໌ : ທ່ານມີຄວາມຫຍຸ້ງຍາກຫລາຍປານໃດກ່ຽວກັບການສຶກສາຢູ່ໃນປະເທດນີ້ໂດຍສະເພາະທາງດ້ານພາສາແລະພາກວິຊາການຕ່າງໆ ?

ທ່ານໝໍສົມໝາຍ : ໃນຕອນທຳອິດກໍຄິດຍາກໃຈຢູ່ເໝືອນກັນເພາະມັນບໍ່ແມ່ນພາສາພື້ນບ້ານຂອງເຮົາມາແຕ່ກຳເນີດໂດຍສະເພາະການຂຽນການຟັງກັບການໂອ້ລົມກັບຄົນອະເມຣິກັນແມ່ນຍັງລຳບາກໃຈຫລາຍທີ່ສຸດຢູ່ໃນເວລານັ້ນ ແຕ່ພໍເຮົາໄດ້ເຂົ້າໄປສຳພັດລອງກຶກລອງຜິດຕລອດການມີມານະອົດທົນເອົາໃຈໃສ່ກອດກອບເອົາບົດຮຽນກັບຄົນທີ່ໃກ້ຊິດແລະໃຫ້ເວລາຄົ້ນຄວ້າສຶກສາຢູ່ກັບມັນຕລອດເວລາ ບໍ່ດົນເຮົາກໍສາມາດເຮັດໄດ້ເວົ້າໄດ້ຢ່າງບໍ່ຍາກຊາ ທັງໝົດທີ່ເຮົາຈະສາມາດຜ່ານຜ່າມັນອອກໄປໄດ້ກໍຄືຄວາມກ້າແລະອົດທົນຄື "ບໍ່ອາຍ" ໃນຄວາມຄິດຂອງຂ້າພະເຈົ້າຕອນທີ່ເຂົ້າໄປຮ່ຳຮຽນຢູ່ໃນສະຖາບັນການສຶກສາແຫ່ງນັ້ນທີ່ກ່ຽວກັບສັພທາງດ້ານເທັກນິກນັ້ນແມ່ນລຳບາກໃຈຫລາຍທີ່ສຸດເພາະທຸກຢ່າງບໍ່ມີຫຍັງທີ່ເຫັນວ່າງ່າຍໄປເລີຍ.

ລາວແນັດທ໌ : ດ້ວຍເຫດໃດກັນຈຶ່ງຕ້ອງມາເລືອກຮຽນເອົາວິຊາທັນຕະແພທ "ໝໍປົວແຂ້ວ" ?

ທ່ານໝໍສົມໝາຍ : ເພາະວ່າຂ້າພະເຈົ້າມັກທີ່ຈະຮຽນວິຊາທາງດ້ານການຮັກສາຄົນມາແຕ່ດົນນານແລ້ວ ຕົວຢ່າງຄືຢູ່ໃນປະເທດລາວພູ້ນກໍດີຜູ້ຄົນສ່ວນຫລວງຫລາຍກໍຈະເລືອກໄປຮຽນໃນທາງດ້ານໝໍຮັກສາຄົນທົ່ວໄປ ແຕ່ສຳຫລັບຕົວຂ້າພະເຈົ້າແລ້ວແມ່ນໄດ້ຕັດສິນໃຈເລືອກເອົາຝ່າຍໝໍປົວແຂ້ວເພາະຂ້າພະເຈົ້າມັກແລະສາມາດທີ່ຈະຄວບຄູມເວລາຂອງການເຮັດວຽກງານທີ່ເປັນຂອງຕົວເອງໄດ້ຫລາຍກວ່າ.

ລາວແນັດທ໌ : ມີຄວາມຫຍຸ້ງຍາກລຳບາກໃຈຢ່າງໃດຢ່າງນຶ່ງຫລືບໍ່ກັບການທີ່ຈະໄດ້ລາຍເຊັ່ນຫລື "ໃບອະນຸຍາດ" ໃຫ້ຕັ້ງຄລີນິກໝໍປົວແຂ້ວຢູ່ໃນທີ່ນີ້ ?

ທ່ານໝໍສົມໝາຍ : ທຳອິດກໍຫຍຸ້ງຍາກໃຈຢູ່ບໍ່ແມ່ນໜ້ອຍ ເພາະທາງພາກປະຕິບັດຕົວຈິງນັ້ນເຮົາຕ້ອງສາມາດເຮັດໃຫ້ພວກເຂົາໄດ້ເຫັນວ່າເຮົາມີຄວາມສາມາດທີ່ຈະທຳງານກັບຄົນເຈັບໄດ້ໃນທຸກໆກໍຣະນີແລະອີກຢ່າງນຶ່ງໃນແຕ່ລະຣັຖທີ່ກ່ຽວກັບການສອບເສັງເອົາລາຍເຊັນມັນກໍແຕກຕ່າງກັນໄປມີບາງຣັຖກໍງ່າຍ ແລະບາງຣັຖກໍຍາກ ແຕ່ເທົ່າທີ່ໄດ້ຮູ້ມາແລ້ວນີ້ຢູ່ທີ່ ຣັຖຟລໍຣິດາກັບຣັຖເທັກຊັສນີ້ລະແມ່ນຍາກຫລາຍທີ່ສຸດຢູ່ໃນສະຫະຣັຖອະເມຣິກາ

ລາວແນັດທ໌ : ຢາກຈະຊາບວ່າໃນຕອນທີ່ຮຽນກ່ຽວກັບພາກວິຊານີ້ທ່ານເຄີຍໄດ້ຮັບຣາງວັນທີ່ດີເດັ່ນອັນໃດກັນແດ່ ?

ທ່ານໝໍສົມໝາຍ : ຂ້າພະເຈົ້າໄດ້ຮັບເງິນທຶນການຊ່ອຍເຫລືອຈາກຣັຖບານສະຫະຣັຖ ແລະຢູ່ໃນຕອນນັ້ນແມ່ນມີພຽງສອງຄົນທີ່ຈະໄດ້ຮັບເງິນທຶນເພື່ອເຂົ້າໄປສຶກສາຕໍ່ຢູ່ໃນມະຫາວິທະຍາໄລແຫ່ງນີ້ກ່ຽວກັບການຄັດເລືອກເອົາຜູ້ຄົນນັ້ນແມ່ນມີຄວາມເຄັ່ງຄັດຫລາຍກວ່າການຮ່ຳຮຽນແລະການສອບເສັງຈັດໄດ້ວ່າເປັນທຶນການສຶກສາທີ່ຣັຖບານໃຫ້ກັບນັກຮຽນທີ່ຮຽນດີແລະໃຫ້ເປັນຣາງວັນໃນສອງປີທຳອິດພ້ອມກັບຄ່າໃຊ້ຈ່າຍອື່ນໆທັງໝົດ ແຕ່ພໍຂຶ້ນສູ່ປີທີ່ສາມແລະສີ່ແລ້ວບັນດານັກຮຽນທີ່ໄດ້ຮັບທຶນການສຶກສານີ້ກໍຈະຕ້ອງໄດ້ກັບມາໃຊ້ທຶນຄືນໂດຍການເຮັດວຽກງານໃຊ້ຄືນ ແລະຂ້າພະເຈົ້າກໍໄດ້ຕັດສິນໃຈບໍ່ເລືອກເອົາກົດເກນຂໍ້ນີ້ເພາະມັນຈະເປັນການຜູກມັດເຮົາຕລອດໄປ ຂ້າພະເຈົ້າມີຄວາມຕ້ອງການທີ່ຈະອອກມາທຳງານທີ່ເປັນຂອງຕົວເອງຫລາຍກວ່າ.

ລາວແນັດທ໌ : ຄິດວ່າການຮ່ຳຮຽນຢູ່ໃນມະຫາວິທະຍາໄລແຫ່ງນີ້ຈັ່ງໃດຈັ່ງໃດມັນກໍຄົງຈະບໍ່ງ່າຍດັ່ງທີ່ໃຈຄິດເອົາໄວ້ແລ້ວຕົວທ່ານສາມາດຜ່ານຜ່າອຸບປະສັກທີ່ຫຍຸ້ງຍາກເຫລົ່ານັ້ນອອກມາໄດ້ແນວໃດກັນ ?

ທ່ານໝໍສົມໝາຍ : ຕອນທຳອິດກໍຄິດວ່າຍາກຢູ່ເໝືອນກັນສຳຫລັບຄົນບາງຄົນສຳຫລັບຂ້າພະເຈົ້າແລ້ວເຄີຍໄດ້ປະສົບກັບອຸບປະສັກຮອບຕົວມາຢ່າງໂຊກໂຊນແລ້ວກ່ອນໜ້ານີ້ ກ່ຽວກັບເຣື້ອງການທີ່ໄດ້ເຂົ້າມາຮຽນຢູ່ໃນສະຖາບັນແຫ່ງນີ້ຂ້າພະເຈົ້າຄິດວ່າບໍ່ມີຫຍັງຍາກສຳຫລັບຂ້າພະເຈົ້າເລີຍເພາະຂ້າພະເຈົ້າໄດ້ໃຊ້ເວລາສ່ວນຫລວງຫລາຍຢູ່ກັບການຄົ້ນຄວ້າ ມັກອ່ານມັກທົບທວນວິຊາການຕ່າງໆເກືອບທຸກໆມື້ພາຍຫລັງທີ່ເລີກຈາກຮຽນມາເຖີງບ້ານແລະມື້ສຸດສັບປະດາກໍບໍ່ຄ່ອຍຈະໄດ້ອອກໄປທ່ຽວທາງໃດກັນຫລາຍຈະບໍ່ເປັນເໝືອນກັບຄົນບາງຄົນທີ່ເປັນຜູ້ທີ່ມີສມອງດີຊຶ່ງບໍ່ຕ້ອງໄດ້ທົບທວນ ຮູ້ບໍ່ວ່າໃນຕອນທີ່ໄປເຂົ້າຮຽນຢູ່ໃນສະຖາບັນແຫ່ງນີ້ມີບາງມື້ຂ້າພະເຈົ້າສາມາດໄດ້ລົ້ມຕົວນອນພັກຜ່ອນແຕ່ພຽງຊົ່ວໂມງດຽວເທົ່ານັ້ນເອງຖ້າມື້ໃດຈະມີການສອບເສັງພາກວິຊາການທີ່ຍາກໆ.

ລາວແນັດທ໌ : ທ່ານໄດ້ມີການຈັດວາງເວລາແບບໃດກັນແດ່ໃນການຮ່ຳຮຽນຢູ່ໃນສະຖາບັນແຫ່ງນີ້ ?

ທ່ານໝໍສົມໝາຍ : ຂ້າພະເຈົ້າຈະຮ່ຳຮຽນເວລາປະມານ 9 ໂມງເຊົ້າໄປເຖີງ 5 ໂມງແລງຫລັງຈາກນັ້ນກໍຈະພັກຜ່ອນຊົ່ວໂມງນຶ່ງ ແລ້ວອ່ານໜັງສືຕໍ່ຕັ້ງແຕ່ 7 ໂມງໄປເຖີງທ່ຽງຄືນ ນອກຈາກມື້ໃດຈະມີການສອບເສັງຂ້າພະເຈົ້າກໍຈະຢູ່ເຖີງສອງສາມໂມງເຊົ້າ.

ລາວແນັດທ໌ : ທີ່ກ່ຽວກັບປັນຫາທາງດ້ານການເງິນໃນການເປັນນັກຮຽນທຶນຢູ່ໃນທີ່ນີ້ທ່ານໄດ້ມີການຈັດສັນໃຫ້ກັບຕົວເອງແບບໃດ ເພາະການຮຽນກ່ຽວກັບວິຊາໝໍປົວແຂ້ວນີ້ຈັ່ງໃດໆມັນກໍຈະຕ້ອງໄດ້ໃຊ້ເງິນຢ່າງຫລວງຫລາຍຢູ່ແລ້ວ?

ທ່ານໝໍສົມໝາຍ : ຢູ່ໃນຊ່ວງສີ່ປີທຳອິດຂ້າພະເຈົ້າຕ້ອງໄດ້ໃຊ້ເງິນກູ້ຢືມຂອງຣັຖບານມາບັນເທົາຊີວິດການເປັນຢູ່ ແລະເຮັດວຽກງານນອກເວລາເພື່ອໃຫ້ໄດ້ເງິນມາໃຊ້ຈ່າຍໃນການຢູ່ກິນໃຫ້ພຽງພໍສຳຫລັບທາງດ້ານຄອບຄົວຂອງຂ້າພະເຈົ້າແລ້ວກໍບໍ່ໄດ້ເປັນຄົນທີ່ຮັ່ງມີມາກ່ອນແຕ່ຢ່າງໃດກັນພໍໄດ້ເຂົ້າມາຮ່ຳຮຽນຢູ່ໃນພາກວິຊາຂອງໝໍປົວແຂ້ວໃນຊ່ວງສີ່ປີທຳອິດກໍຮູ້ສຶກວ່າດີຫລາຍເພາະຍັງມີທຶນຈາກຣັຖບານທີ່ໄດ້ຊ່ອຍຈ່າຍໃຫ້.

ລາວແນັດທ໌ : ທ່ານໃຊ້ເວລາດົນນານປານໃດກວ່າຈະສຳເຣັດການສຶກສາພາກວິຊາໝໍປົວແຂ້ວນີ້?

ທ່ານໝໍສົມໝາຍ : ສະລຸບແລ້ວກໍໃຊ້ເວລາດົນນານເຖີງ 8 ປີກັບ 4 ເດືອນ ແລະສີ່ປີທີ່ໂຮງຮຽນສະເພາະໝໍປົວແຂ້ວ.

ລາວແນັດທ໌ : ທ່ານມີຄວາມຮູ້ສຶກຢ່າງໃດກັນກັບວຽກງານທີ່ໄດ້ປະຕິບັດຜ່ານມານີ້ ແລະຖ້າຫາກວ່າສາມາດປ່ຽນແປງສິ່ງໃດສິ່ງນຶ່ງໄດ້ຕື່ມທ່ານມີຄວາມຄິດທີ່ຈະປ່ຽນແປງມັນຫລືບໍ່ ?

ທ່ານໝໍສົມໝາຍ : ຂ້າພະເຈົ້າຄິດວ່າ ມັນກໍຍັງເປັນເຣື້ອງທີ່ທ້າທາຍສຳຫລັບຊີວິດແລະອານາຄົດຂອງຕົວເອງຢູ່ບໍ່ຫລາຍກໍນ້ອຍ ໃນຕອນທຳອິດຂ້າພະເຈົ້າກໍຄິດວ່າຂ້າພະເຈົ້າຕ້ອງຮູ້ທຸກຢ່າງກ່ຽວກັບວຽກງານຂອງຕົວເອງ ແຕ່ແທ້ຈິງແລ້ວມັນບໍ່ເປັນແບບນັ້ນເລີຍ ຍັງມີອີກຫລາຍໆຢ່າງທີ່ຈະຕ້ອງໄດ້ຮັບການປ່ຽນແປງກ່ຽວກັບການຮຽນຮູ້ການສື່ສາຣກັບຜູ້ຄົນທຸກໆລະດັບ ຕ້ອງມີຄວາມເຂົ້າໃຈຕໍ່ປັນຫາແລະຄວາມຕ້ອງການຂອງຜູ້ຄົນສ່ວນຫລວງຫລາຍທີ່ເຂົ້າມາຫາເຮົາເພື່ອໃຫ້ເຮົາທຳການຮັກສາປິ່ນປົວຊຶ່ງທຸກຢ່າງແມ່ນມີຄວາມສຳຄັນພໍໆກັນໄປໝົດ ທີ່ກ່ຽວກັບການເງິນນັ້ນມັນກໍຂ້ອນຂ້າງທີ່ຈະລຳບາກໃນຕອນທຳອິດທີ່ເຂົ້າມາເຮັດທຸຣະກິຈນີ້ ແຕ່ພາຍຫລັງໄດ້ປະສົບການຜ່ານມາ 14 ປີນີ້ຂ້າພະເຈົ້າກໍສາມາດໄດ້ຮຽນຮູ້ຕື່ມຫລາຍສິ່ງຫລາຍແນວແລະທຳການປ່ຽນແປງຫລາຍຢ່າງທີ່ມັນຄວນຈະໄດ້ຮັບການປັບປຸງແກ້ໄຂເປັນຂັ້ນຕອນມາແລະຈົນທຸກມື້ນີ້ທຸກຢ່າງທີ່ຂ້າພະເຈົ້າໄດ້ຮັບມັນກັບຄືນມາຈາກການທີ່ຂ້າພະເຈົ້າມີຄວາມສູ້ທົນຜ່ານຜ່າແລະດ້ວຍຄວາມຕັ້ງໃຈຈິງໃນການຮຽນຮູ້ ແລະຝຶກຝົນແມ່ນໄດ້ເຮັດໃຫ້ຂ້າພະເຈົ້າມີຄວາມພູມໃຈເປັນທີ່ສຸດທີ່ຍັງເຫັນຄຸນຄ່າຂອງຊີວິດທີ່ດີຂື້ນມາ.



ລາວແນັດທ໌ : ທ່ານໝໍສົມໝາຍມີອັນໃດແດ່ທີ່ຈະຝາກໄປເຖີງເຍົາວະຊົນລາວຂອງເຮົາໃນທີ່ນີ້ຫລືຈະຢູ່ພາຍໃນປະເທດລາວພູ້ນກໍດີທີ່ກຳລັງມີຄວາມໄຝ່ຝັນທີ່ຢາກຈະເຂົ້າມາຍຶດເອົາອາຊີພໝໍປົວແຂ້ວທັງໃນປັດຈຸບັນແລະອານາຄົດເພື່ອຄວາມໝັ້ນຄົງໃນຊີວິດການງານ ?

ທ່ານໝໍສົມໝາຍ : ກ່ອນອື່ນຂ້າພະເຈົ້າໃນນາມຄົນລາວຜູ້ນຶ່ງທີ່ໄດ້ຜ່ານການສຶກສາຮ່ຳຮຽນກ່ຽວກັບອາຊີບໝໍປົວແຂ້ວແມ່ນຢາກຈະໃຫ້ຄວາມຄິດທີ່ດີກັບເຍົາວະຊົນລາວທຸກໆທ່ານທີ່ມີຄວາມສົນໃຈຈະໄປສຶກສາຕໍ່ຢູ່ໃນສະຖາບັນໃດກໍດີກໍຄວນທີ່ຈະໄດ້ທຳການຕິດຕໍ່ ແລະລອງຊອກຫາເບິ່ງສະຖານທີ່ເຫລົ່ານັ້ນວ່າ ສະຖາບັນໃດກັນມັນຈະກົງກັບຄວາມຕ້ອງການຂອງທ່ານຫລືບໍ່? ສ່ວນການຮ່ຳຮຽນກ່ຽວກັບຝ່າຍໝໍປົວແຂ້ວນັ້ນກໍເປັນພາກວິຊາການທີ່ເຫັນໄດ້ວ່າມີຄວາມກວ້າງຂວາງມີຫລາຍໆສາຂາແລະກໍຈະຕ້ອງໄດ້ໃຫ້ເວລາໃນການຝຶກຝົນໃຫ້ກັບຕົວເອງຫລາຍຂື້ນ ຜູ້ຄົນໃນຍຸກປັດຈຸບນກຳລັງປະສົບກັບການຮຽນຮູ້ຢູ່ກັບສິ່ງທີ່ໃໝ່ໆໃນທຸກໆມື້ແລະຄິດວ່າມັນກໍຍັງຄົງຍາກໃຈຢູ່ບໍ່ແມ່ນຂອງຄ່ອຍເພາະພວກເຮົາຈະຕ້ອງໄດ້ກ້າວໄປຕາມເທັກໂນໂລຍີສມັຍໃໝ່ຍົກຕົວຢ່າງທີ່ກ່ຽວກັບການປິ່ນປົວໂຣຄແຂ້ວແລະການຮັກສາກັບຜູ້ປ່ວຍທີ່ບໍ່ມີແຂ້ວເລີຍຈັກເຫລັ້ມມັນກໍເປັນເຣື້ອງທີ່ສຳຄັນບໍ່ແມ່ນໜ້ອຍເພາະພາຍຫລັງຈາກການຮັກສາປິ່ນປົວສຳເຣັດໄປແລ້ວ ພວກເຂົາເຈົ້າກໍສາມາດທີ່ຈະກັບຄືນມາມີແຂ້ວທີ່ສວຍງາມຄືກັນກັບຜູ້ຄົນໂດຍທົ່ວໆໄປໄດ້ອີກຄັ້ງນຶ່ງນີ້ຄືຄວາມຈິງຣະຫວ່າງໝໍກັບຄົນປ່ວຍຊຶ່ງມີໜ້າທີ່ຄວນຈະໄດ້ຮ່ວມກັນສຶກສາໃຫ້ແທດເໝາະກັບການປະຕິບັດບໍ່ວ່າຈະງ່າຍຫລືຍາກໃນການໃຫ້ການບໍຣິການ.

ລາວແນັດທ໌ : ກັບຄືນໄປທີ່ຕອນທ່ານຍັງສຶກສາຢູ່ໃນມະຫາວິທຍາໄລໃນເມື່ອກ່ອນນັ້ນ ທ່ານເຄີຍມີຄວາມຮູ້ສຶກຢ່າງໃດກັນແດ່ກັບການແບ່ງແຍກຊົນຊາດເຣື້ອງສີຜິວທີ່ເກີດຂຶ້ນຢູ່ໃນຣັກນີ້ ?

ທ່ານສົມໝາຍ : ບໍ່ມີຫຍັງກ່ຽວກັບເຣື່ອງນີ້ໃນສະຖາບັນແຫ່ງນັ້ນ ແລະຂ້າພະເຈົ້າກໍບໍ່ໄດ້ຄິດເລີຍວ່າເປັນການແບ່ງແຍກເຊື້ອຊາດ ຂ້າພະເຈົ້າຮູ້ສຶກວ່າຂ້າພະເຈົ້າຕ້ອງໄດ້ຮຽນໜັກກວ່າຜູ້ຄົນອື່ນໆໃນຂນະທີ່ຍັງບໍ່ສຳເຣັດຫລັກສູດການຮຽນ.

ລາວແນັດທ໌ : ທ່ານມີຄຳອະທິບາຍແນະນຳຢ່າງໃດກັນຫລືບໍ່ກັບເດັກນ້ອຍລາວໃນທີ່ນີ້ໃນການເບິ່ງແຍງແຂ້ວ?

ທ່ານໝໍສົມໝາຍ : ຂ້າພະເຈົ້າຄິດວ່າພວກເດັກນ້ອຍເຫລົ່ານີ້ຄວນຈະໄດ້ໃຊ້ເວລາປະມານນຶ່ງນາທີໃນການເຮັດຄວາມສະອາດແຂ້ວໃນທຸກໆເຊົ້າແລງໃນການເຮັດໃຫ້ສຸຂພາບແຂ້ວ ມີຄວາມຄົງທົນບໍ່ເປັນແມງກັດຈົນເຮັດໃຫ້ໝົດຄວາມສວຍງາມໄປມີບາງຄົນທີ່ຂ້າພະເຈົ້າເຫັນຊຶ່ງໄດ້ທຳການຖູແຂ້ວລ້າງປາກຕົວເອງກໍຍັງບໍ່ເກີງ 30 ວິນາທີເລີຍ.

ລາວແນັດທ໌ : ຕາມປົກກະຕິໂດຍທົ່ວໄປແລ້ວພວກເຮົາຄວນທີ່ຈະໄດ້ມີການອະນາມັຍແຂ້ວມື້ ນຶ່ງຈັກເທື່ອແທ້?

ທ່ານໝໍສົມໝາຍ : ບາງຄົນອາດຈະບອກວ່າມື້ນຶ່ງສອງຄັ້ງ ຫລືສາມຄັ້ງເປັນຢ່າງນ້ອຍ ແຕ່ໃນຄວາມຄິດຂອງໝໍແຂ້ວຢ່າງຂ້າພະເຈົ້ານັ້ນຄວນທີ່ຈະເຮັດຄວາມສະອາດແຂ້ວໃນທຸກໆຄັ້ງພາຍຫລັງການຮັບປະທານອາຫານ ເພາະຖ້າທ່ານຮູ້ສຶກສາວ່າມີເສດອາຫານຕິດຄ້າງຢູ່ຕາມຫວ່າງແຂ້ວທ່ານຈະບໍ່ມີຄວາມຮູ້ສຶກລຳຄານໃຈຫຍັງແດ່ບໍ່? ທ່ານກໍຈະຕ້ອງໄດ້ເຮັດຄວາມສະອາດເປັນຂອງທັມະດາ ແລະການທີ່ຈະປະປ່ອຍເອົາໄວ້ໂດຍທີ່ບໍ່ເຮັດຫຍັງທັງນັ້ນ ກໍຄິດວ່າມັນອາດຈະເຮັດໃຫ້ຊ່ອງປາກຂອງທ່ານເກີດມີກິ່ນທີ່ບໍ່ດີເລັດລອດອອກມາໃນຂນະທີ່ທ່ານທຳການໂອ້ລົມກັບຜູ້ຄົນໃກ້ຕົວຈະເກີດຄວາມຮູ້ສຶກຂຶ້ນມາໃນທັນທີແຕ່ຜູ້ຄົນເຫລົ່ານັ້ນຈະບໍ່ທັກທ້ວງທ່ານໄດ້ດ້ວຍມາຣະຍາດຂອງຄົນໃນສັງຄົມຜູ້ດີ.

ລາວແນັດທ໌ : ການທຳຄວາມສະອາດແຂ້ວຫລາຍໆຄັ້ງຕໍ່ມື້ນຶ່ງຈະເປັນການທຳລາຍແຂ້ວໃຫ້ເສັຽຫາຍໄດ້ຫລືບໍ່?

ທ່ານໝໍສົມໝາຍ : ໂດຍທົ່ວໄປແລ້ວ ຖ້າທ່ານໃຊ້ແປງສີແຂ້ວທີ່ນິ້ມໆບໍ່ແຂງ ມັນກໍບໍ່ມີຫຍັງຈະເກີດເປັນປັນຫາໃຫ້ກັບແຂ້ວ ຖ້າເຮັດຢ່າງຖືກຕ້ອງຕາມວິທີການແນະນຳຂອງໝໍເຊັ່ນເວລາການເຮັດອານາມັຍຖູແຂ້ວເຮົາກໍບໍ່ຄວນຖູແຮງໆໄປຕາມອາຣົມໃຈເຮົາ.

ລາວແນັດທ໌ : ຮູ້ຫລືບໍ່ວ່າແປງຖູແຂ້ວທີ່ເຮົາຊື້ມາໃຊ້ງານກັບແຂ້ວເຮົາ ມັນມີອາຍຸການໃຊ້ງານນ້ອຍຫລາຍປານໃດກັນແທ້ ?

ທ່ານໝໍສົມໝາຍ : ມັນກໍແລ້ວແຕ່ຊະນິດຄຸນນະພາບຂອງແປງສີແຂ້ວ ແຕ່ໃນຄວາມຄິດຂອງຂ້າພະເຈົ້ານັ້ນເຮົາຄວນທີ່ຈະປ່ຽນມັນທຸກໆດືອນ ຖ້າເຮັດໄດ້ຈະເປັນການດີຫລາຍທີ່ສຸດ ອີກຢ່າງນຶ່ງແປງສີແຂ້ວກໍບໍ່ໄດ້ມີຣາຄາແພງພໍເທົ່າໃດກັນ? ຂໍແນະນຳອີກຢ່າງນຶ່ງຊຶ່ງເປັນສິ່ງທີ່ຄວນເຮັດໄດ້ກໍຄືເຮົາຄວນຈະມີແປງສີແຂ້ວຕິດຕົວໄວ້ສຳຫລັບໃນທຸກໆໂອກາດ ຕົວຢ່າງເຊັ່ນໃນການເຮັດຄວາມສະອາດປາກຕອນເຊົ້າ ຕອນສວາຍຫລືຕອນແລງກ່ອນ ນອນດ້ວຍວ່າການສີແຂ້ວຮັກສາຄວາມສະອາດປາກໂດຍໃຊ້ນ້ຳບ້ວນປາກຢູ່ເລື້ອຍໆມັນກໍ ຈະເຮັດໃຫ້ແຂ້ວ ຂອງເຮົານັ້ນນິ້ມນວນຈົນເກີນໄປທາງທີ່ດີຄວນທີ່ຈະມີເວລາປ່ອຍໃຫ້ມັນແຫ້ງຊະນິດ ອີກຢ່າງກໍຄືຖ້າສັງເກດວ່າປາຍຂອງຂົນແປງສີແຂ້ວນັ້ນເລີ້ມງໍກໍເປັນການເຕືອນໃຫ້ຮູ້ວ່າ ຄວນທີ່ ຈະໄດ້ທຳການປ່ຽນໃຊ້ຂອງໃໝ່ກັນໄດ້ແລ້ວ.

ລາວແນັດທ໌ : ກ່ຽວກັບການເລືອກຊື້ແປງສີແຂ້ວມາໃຊ້ ທ່ານໝໍມີຄຳແນະນຳຢ່າງໃດກັນແດ່ລະ?

ທ່ານໝໍສົມໝາຍ : ຂ້າພະເຈົ້າຄິດວ່າເຮົາຄວນທີ່ຈະເລືອກຊື້ເອົາແປງສີແຂ້ວທີ່ດີທີ່ສຸດ ຢ່າງທີ່ເປັນຍີ່ຫໍ້ດັງໆໂດຍທົ່ວໆໄປນັ້ນແຫລະມີຂາຍຢູ່ໃນຕລາດແລະຮ້ານຢາທຸກໆບ່ອນດ້ວຍວ່າແປງສີແຂ້ວຈຳພວກນີ້ແມ່ນໄດ້ຮັບການທົດລອງກວດສອບມາເປັນຢ່າງດີແລ້ວຈາກເຈົ້າໜ້າທີ່ໜ່ວຍງານທີ່ກ່ຽວກັບຂ້ອງຂອງອົງການເພື່ອສຸຂພາບ ທ່ານບໍ່ຄວນຈະໄປຊື້ເອົາແປງຂອງກືກໆມາໃຊ້ເພາະຈະເກີດປັນຫາເຮັດໃຫ້ແຂ້ວກືກທຳລາຍໃຫ້ຄິດເສັຽວ່າ "ຣາຄາຄ່າເຮັດແຂ້ວເຫລັ້ມນຶ່ງຢ່າງຕ່ຳກໍບໍ່ລຸດ 500 ດອນລາແລ້ວ".

ລາວແນັດທ໌ : ທ່ານໝໍພໍຈະແນະນຳໄດ້ບໍ່ວ່າ ເຮົາຈະສັງເກດໄດ້ແນວໃດກັນວ່າແຂ້ວຂອງເຮົາເລີ້ມເກີດມີປັນຫາແລ້ວ ?

ທ່ານໝໍສົມໝາຍ : ກໍໃນຕອນທີ່ພວກເຮົາຫຍ້ຳອາຫານ ຫລືເວລາທີ່ດື່ມນ້ຳເຢັນໆ ຫລືຂອງຫວານເຂົ້າໄປນັ້ນແຫລະ ເຮົາຈະສາມາດຮູ້ໄດ້ເລີຍວ່າແຂ້ວເຫລັ້ມໃດກັນທີ່ເກີດມີອາການເຈັບປວດຂຶ້ນມາ ແລະນັ້ນແຫລະຄືອາການຂອງແຂ້ວທີ່ມີປັນຫາຂຶ້ນມາແລ້ວ.

ລາວແນັດທ໌ຂໍຂອບໃຈກັບທ່ານໝໍ "ສົມໝາຍ ສິຣິພັນໂຍ" ເປັນຢ່າງຍິ່ງທີ່ໄດ້ໃຫ້ໂອກາດສັມພາດກ່ຽວກັບຊີວິດແລະປະສົບການຫລາຍໆຢ່າງໃນຊີວິດກັບການກ້າວເຂົ້າມາສູ່ກິຈການບໍຣິການສັງຄົມໂດຍການເປັນໝໍຮັບໃຊ້ສັງຄົມໃນຕ່າງແດນກັບນິຕຍະສາຣລາວແນັດທ໌ຂອງເຮົາ.



